

# ບັນດາປະເທດຕາມລ້ອງແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ຮ່ວມກັນສ້າງບ້ານເມືອງທີ່ສວຍງາມ

ກອງປະຊຸມສຸດຍອດຄັ້ງທີ 8 ຂອບການຮ່ວມມືເສດຖະກິດອະນຸພາກພື້ນ ແມ່ນ້ຳຂອງ ຫຼື GMS ດ້ວຍຫົວຂໍ້ "ສຸມໃສ່ການພັດທະນາດ້ວຍການປະດິດສ້າງໃໝ່ ແລະ ຮ່ວມກັນສ້າງບ້ານເມືອງທີ່ສວຍງາມ" ໄດ້ຈັດຂຶ້ນຢູ່ນະຄອນຄຸນໝິງ ແຂວງຢຸນນານ ສປ ຈີນ ໃນວັນທີ 6 ຫາ 7 ພະຈິກນີ້. ຈີນ ແລະ ບັນດາປະເທດຕາມລ້ອງແມ່ນ້ຳຂອງ ທີ່ມີພູຜາແມ່ນ້ຳຕິດຈອດກັນ, ປະຊາຊົນໄປມາຫາສູ່ກັນຢ່າງໃກ້ຊິດກັນ ແລະ ວັດທະນະທຳທີ່ຄ້າຍຄືກັນ, ໃນອະນຸພາກພື້ນມີຊັບພະຍາກອນທີ່ອຸດົມສົມບູນ, ມີປະຊາກອນອັນມະຫາສານ ແລະ ມີຄວາມສາມາດດ້ານຕະຫຼາດອັນໃຫຍ່ຫຼວງ, ຄວາມເຫັນດີເຫັນພ້ອມຂອງບັນດາປະເທດໃນພາກພື້ນ ເພື່ອຮ່ວມມືຊອກຫາການພັດທະນາຮ່ວມກັນ. ພາຍໃຕ້ຂອບການຮ່ວມມືຕ່າງໆ ເຊັ່ນ: ຂອບການຮ່ວມມືເສດຖະກິດອະນຸພາກພື້ນແມ່ນ້ຳຂອງ ແລະ ອື່ນໆ, ວິສາຫະກິດໃນພາກພື້ນນີ້ ໄດ້ຊົມໃຊ້ໂອກາດພັດທະນາຮ່ວມກັນ ແລະ ໄດ້ຂຽນເລື່ອງລາວທີ່ດີງາມ ກ່ຽວກັບການຮ່ວມກັນສ້າງບ້ານເມືອງທີ່ສວຍງາມ.

## ການຮ່ວມມືທີ່ສ້າງອະນາຄົດທີ່ດີງາມ

ເມື່ອເວົ້າເຖິງສະພາບການປະຕິບັດງານຂອງບໍລິສັດສາຍສົ່ງໄຟຟ້າແຫ່ງຊາດລາວ, ທ່ານ ຫຼີນຢຸ້ຍ ປະທານບໍລິສັດດັ່ງກ່າວ ກ່າວວ່າ: "ບໍລິສັດສາຍສົ່ງໄຟຟ້າແຫ່ງຊາດລາວ ຈຳກັດ ໄດ້ປະສານສົມທົບກັບລັດວິສາຫະກິດໄຟຟ້າລາວ ເພື່ອລາດຕະເວນ ແລະ ຮັກສາອຸປະກອນສົ່ງ ແລະ ປັບປຸງໄຟຟ້າ ພ້ອມທັງວຽກງານກວດກາໃນເວລາມອດໄຟຟ້າ. ສອງຝ່າຍ ໄດ້ຮ່ວມມືກັນ ເພື່ອກວດກາ ແລະ ລົບລ້າງຄວາມສ່ຽງທີ່ແຝງຊ້ອນຢູ່ຈຳນວນບໍ່ໜ້ອຍ. ໃນຂະນະດຽວກັນ, ຍັງໄດ້ວາງມາດຕະການຄຸ້ມຄອງພິເສດຕໍ່ສະພາບທີ່ ແບັກເກີສາຍສົ່ງໄຟຟ້າລົ້ມ ໃນກໍລະນີພິເສດຕ່າງໆ ເຊັ່ນ: ຝົນຕົກໜັກໃນລະດູຝົນ, ໄຟໄໝ້ລາມປ່າ ແລະ ອື່ນໆ."

ປີ 2024, ເພື່ອຊຸກຍູ້ການພັດທະນາແບບຍືນຍົງຂອງພະລັງງານໄຟຟ້າລາວ, ບໍລິສັດຕາຂ່າຍໄຟຟ້າພາກໃຕ້ຈີນ ແລະ ລັດວິສາຫະກິດໄຟຟ້າລາວ ໄດ້ຮ່ວມທຶນສ້າງບໍລິສັດສາຍສົ່ງໄຟຟ້າແຫ່ງຊາດລາວ ຈຳກັດ.

ປັດຈຸບັນ, ລັດວິສາຫະກິດໄຟຟ້າລາວ ພວມເລັ່ງຄວາມສາມາດສົ່ງໄຟຟ້າ ເພື່ອບັນລຸການຈັດສັນສົ່ງໄຟຟ້າຂ້າມທ້ອງຖິ່ນ ແລະ ຕອບສະໜອງກັບຄວາມຕ້ອງການໄຟຟ້າທີ່ເພີ່ມຂຶ້ນ; ສືບຕໍ່ປັບປຸງໂຄງປະກອບຕາຂ່າຍໄຟຟ້າຂອງລາວ ໃຫ້ດີຂຶ້ນ ແລະ ຍົກຄວາມໄວ້ວາງໃຈຂອງຕາຂ່າຍສົ່ງໄຟທັງໝົດ ເພື່ອເປັນສິ່ງຄ້ຳປະກັນໃຫ້ແກ່ການພັດທະນາເສດຖະກິດສັງຄົມລາວ.

ທ່ານ ຫຼີນຢຸ້ຍ ກ່າວຕື່ມວ່າ: ທາງບໍລິສັດ ເອົາໃຈໃສ່ໃນການປະຕິບັດໜ້າທີ່ທາງສັງຄົມ ໂດຍໄດ້ຈັດກິດຈະກຳສາທາລະນະປະໂຫຍດ 7 ຄັ້ງ ຢູ່ຕາມໂຮງຮຽນປະຖົມ ແລະ ອີງການສຶກສາທາງພົນລະເຮືອນສຳລັບເດັກນ້ອຍ ພິການຫູ ຢູ່ທ້ອງຖິ່ນ. ໄດ້ສ້າງກົນໄກແລກປ່ຽນໂຮ້ຊາຍແດນດ້ານຊັບພະຍາກອນມະນຸດ, ສືບຕໍ່ຊ່ວຍອົບຮົມບົ່ມສ້າງນັກສຶກສາລາວທີ່ໄປຮຽນຕໍ່ຢູ່ຈີນ ແລະ ຊ່ວຍສ້າງພະນັກງານວິຊາການໃນລະບົບພະລັງງານໄຟຟ້າຂອງລາວ.

ຄຽງຄູ່ກັບການຮ່ວມມືດ້ານເສດຖະກິດ ໃນອະນຸພາກພື້ນແມ່ນ້ຳຂອງ ໄດ້ຂະຫຍາຍຕົວລົງສູ່ລວງເລິກ, ການຮ່ວມມືດ້ານພະລັງງານ ແລະ ການກໍ່ສ້າງພື້ນຖານໂຄງລ່າງ ດ້ານພະລັງງານໄຟຟ້າ ລະຫວ່າງແຂວງຢຸນນານ ກັບບັນດາປະເທດຕາມລ້ອງແມ່ນ້ຳຂອງ ກໍປະສົບຜົນສຳເລັດທີ່ໂດດເດັ່ນ. ທ່ານ ຫຼີນຢຸ້ຍ ກ່າວຕື່ມອີກວ່າ: "ພວກເຮົາ ຍັງໄດ້ຮ່ວມກັບວິສາຫະກິດພະລັງງານໄຟຟ້າຂອງ 5 ປະເທດ ຕາມລ້ອງແມ່ນ້ຳຂອງ ສ້າງຕັ້ງສະມາຄົມສົ່ງເສີມມາດຕະຖານເຕັກນິກພະລັງງານໄຟຟ້າ ໃນອະນຸພາກພື້ນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ເພື່ອປະກອບສ່ວນເຂົ້າໃນການສ້າງແບບມາດຕະຖານໃນອະນຸພາກພື້ນແມ່ນ້ຳຂອງ."

## ໝາກຖົ່ວລຽນມີກິ່ນຫອມຫວານ ລອງລອຍໄປເຖິງສອງປະເທດ

ປັດຈຸບັນ, ຊາວກະສິກຳແຂວງຕຽນຢາງ ທາງພາກໃຕ້ຫວຽດນາມ ພວມເກັບກູ້ໝາກຖົ່ວລຽນ, ໃນນັ້ນ, ມີຈຳນວນບໍ່ໜ້ອຍຈະສົ່ງເຂົ້າຈີນ.

ທ່ານ ຫວງວຽນຈຸນແມັງ ເປັນນັກທຸລະກິດສົ່ງອອກໝາກຖົ່ວລຽນ ແລະ ໄດ້ເກັບຊື້ໝາກຖົ່ວລຽນຢູ່ທ້ອງຖິ່ນຕ່າງໆ ຂອງຫວຽດນາມ ຕະຫຼອດປີ. ປີ 2018, ທ່ານ ໄດ້ສ້າງຕັ້ງບໍລິສັດການຄ້າຂາເຂົ້າ-ຂາອອກ TA ຫວຽດນາມ ຈຳກັດ. ປີ 2021, ໝາກຖົ່ວລຽນສົດຂອງຫວຽດນາມ ໄດ້ຮັບອະນຸມັດສົ່ງເຂົ້າຈີນ ຢ່າງເປັນທາງການ, ທ່ານ ຫວງວຽນຈຸນແມັງ ໄດ້ສ້າງສາງຢູ່ແຂວງລາງເຊີນຂອງຫວຽດນາມ ເພື່ອນຳສົ່ງໝາກຖົ່ວລຽນສົດຈາກລາງເຊີນເຂົ້າຈີນ ໂດຍຜ່ານດ່ານມິດຕະພາບຈີນ-ຫວຽດນາມ ແລ້ວສົ່ງຕໍ່ໄປສູ່ນະຄອນຫຼວງປັກກິ່ງ, ນະຄອນຊຽງໄຮ້, ນະຄອນກວາງໂຈ່ວ ແລະ ຕົວເມືອງອື່ນໆຂອງຈີນ.

ທ່ານ ຫວງວຽນຈຸນແມັງ ບອກນັກຂ່າວວ່າ: ໃນຈຳນວນໝາກຖົ່ວລຽນ 100 ກວ່າຊະນິດ ຂອງຫວຽດນາມ, ຄົນທັງຫຼາຍຮູ້ດີ ຕໍ່ໝາກຖົ່ວລຽນ Ri6, ຈີນ ແມ່ນຕະຫຼາດສົ່ງອອກໝາກຖົ່ວລຽນໃຫຍ່ທີ່ສຸດຂອງຫວຽດນາມ. ນັບແຕ່ຫວຽດນາມ ສົ່ງອອກໝາກຖົ່ວລຽນເຂົ້າສູ່ຈີນ ເປັນເວລາ 3 ປີປາຍມານີ້, ບໍລິສັດ ມີລາຍໄດ້ເພີ່ມຂຶ້ນ, ຊາວກະສິກອນ ແລະ ຜູ້ຂັບລົດ ກໍລ້ວນແຕ່ມີລາຍໄດ້ເພີ່ມຂຶ້ນເຊັ່ນດຽວກັນ.

ກົນໄກຮ່ວມມື GMS ແລະ ກົນໄກອື່ນໆ ໄດ້ເພີ່ມພະລັງຂັບເຄື່ອນຢ່າງບໍ່ຂາດສາຍໃຫ້ແກ່ການຮ່ວມມືພາກພື້ນ. ເດືອນສິງຫາຜ່ານມາ, ຈີນ ແລະ ຫວຽດນາມ ໄດ້ເຊັນສັນຍາສົ່ງໝາກຖົ່ວລຽນແຊ່ເຢັນຫວຽດນາມ ເຂົ້າຈີນຢ່າງເປັນທາງການ, ທ່ານ ຫວງວຽນຈຸນແມັງ ມີຄວາມໝັ້ນໃຈຕໍ່ຕະຫຼາດຕື່ມອີກ. ທ່ານ ກ່າວວ່າ: "ປັດຈຸບັນ, ມີສັນຍາສົ່ງອອກໝາກຖົ່ວລຽນແຊ່ເຢັນແລ້ວ, ການຂົນສົ່ງໝາກຖົ່ວລຽນ ຈະບໍ່ໄດ້ຈຳກັດຄືແຕ່ກ່ອນແລ້ວ, ຕົ້ນທຶນສົ່ງອອກກໍໄດ້ຫຼຸດລົງຕື່ມອີກ."

## ດອກໄມ້ສົ່ງຕໍ່ຄວາມສວຍງາມ

ນາງ ຈ່າງຢາງຢາງ ເຈົ້າຂອງຮ້ານດອກໄມ້ສີຊົມພູ ພວມມັດຊໍ່ດອກໄມ້ໃຫ້ລູກຄ້າ, ນາງ ກ່າວວ່າ: "ດອກກຸຫຼາບ, ດອກກາໄນຊັນ, ດອກບົວບົກຂາວ ແລະ ດອກໄມ້ຫຼາຍສິບຊະນິດໃນຮ້ານເຮົາ ລ້ວນແຕ່ມາຈາກແຂວງຢຸນນານຂອງຈີນ."

ນາງ ຈ່າງຢາງຢາງ ໄດ້ຄ້າຂາຍດອກໄມ້ມາເປັນເວລາຫຼາຍປີແລ້ວ, ຕອນເລີ່ມຕົ້ນ, ນາງ ໄດ້ຂົນສົ່ງດອກກ້ວຍໄມ້ໄທ ໄປຮົງກົງ ຈີນ ດ້ວຍເຮືອບິນ ແລ້ວສົ່ງໄປຂາຍຢູ່ຕົວເມືອງຕ່າງໆຂອງຈີນ ໂດຍຜ່ານນະຄອນເສິນເຈິ້ນ ແລະ ນະຄອນກວາງໂຈ່ວ ຂອງຈີນ. ນັບແຕ່ ປີ 2008 ເປັນຕົ້ນມາ, ນາງ ກຽມສົ່ງດອກໄມ້ສົດຂອງແຂວງຢຸນນານ ໄປຂາຍຢູ່ປະເທດໄທ ແລະ ໄດ້ເປີດຮ້ານຂາຍດອກໄມ້ສົດຫຼາຍແຫ່ງຢູ່ຕະຫຼາດດອກໄມ້ສົດໃຫຍ່ແຫ່ງຕ່າງໆ ຂອງນະຄອນຫຼວງບາງກອກ ແລະ ຫຼາຍແຂວງຂອງປະເທດໄທ.

ນາງ ຈ່າງຢາງຢາງ ກ່າວວ່າ: "ຕະຫຼອດເວລາ 16 ປີທີ່ດຳເນີນການຄ້າຂາຍດອກໄມ້ສົດຢູ່ໄທ, ພວກເຮົາ ໄດ້ເລີ່ມຈາກຮ້ານດຽວຂະຫຍາຍມາເປັນ 13 ຮ້ານ, ມື້ໜຶ່ງຂາຍດອກໄມ້ສົດໄດ້ຫຼາຍກວ່າໜຶ່ງລ້ານບາດ." ນາງ ກ່າວຕື່ມວ່າ: ປັດຈຸບັນ, ຮ້ານຕົນ ທັງໄດ້ຂາຍຍົກ ແລະ ຂາຍຍ່ອຍ, ພ້ອມທັງຍັງໄດ້ຮັບເໝົາຈັດສັນສະຖານທີ່ຈັດກິດຈະກຳຕ່າງໆ ແລະ ຈັດຊຸດຝຶກອົບຮົມສີມືຈັດສັນດອກໄມ້ເຊັ່ນດຽວກັນ.

ນາງ ຈ່າງຢາງຢາງ ກ່າວວ່າ: "ປັດຈຸບັນ, ສະພາບທຸລະກິດຂອງຮ້ານຕົນ ດີສົມຄວນ, ທຸກອາທິດ, ພວກເຮົາ ຈະນຳເຂົ້າດອກໄມ້ສົດຈາກນະຄອນຄຸນໝິງເຂົ້າມາໄທ 3 ເທື່ອ ໂດຍຜ່ານລົດຂົນສົ່ງ ແຊ່ເຢັນ. ໂດຍອີງຕາມເຄື່ອງມືຂົນສົ່ງທີ່ທັນສະໄໝ ແລະ ເຄືອຂ່າຍຈໍລະຈອນສິນຄ້າທີ່ມີປະສິດທິພາບສູງ, ການຂົນສົ່ງດອກໄມ້ເຫຼົ່ານີ້ຈາກນະຄອນຄຸນໝິງ ແຂວງຢຸນນານ ໄປເຖິງນະຄອນຫຼວງບາງກອກ ແມ່ນໃຊ້ເວລາພຽງ 3 ຫາ 4 ວັນເທົ່ານັ້ນ, ນອກຈາກສົ່ງຕໍ່ໄປສູ່ແຂວງຕ່າງໆຂອງໄທແລ້ວ, ບາງທີຍັງສົ່ງອອກໄປສູ່ກຳປູເຈຍ, ບັນດາປະເທດ ແລະ ເຂດແຄ້ວນ ອື່ນໆອີກ.

ແຫຼ່ງຂ່າວ: ໜັງສືພິມລາຍວັນຢຸນນານ

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com

